ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

===000===

ສຳນັກງານປົກຄອງ ແຂວງຄຳມ່ວນ

ເລກທີ .....03..... /ຈຂ/ຄມ

ຄຳມ່ວນ, ວັນທີ 4 ກຸມພາ 2013

# ແຈ້ງການ

ເຖິງ: ບັນດາເມືອງ, ບັນດາພະແນກການ, ກົມກອງ, ຫ້ອງການ, ອົງການຈັດຕັ້ງສັງຄົມ, ອຳນາດການປົກຄອງທຸກຂັ້ນ ແລະ ຫົວໜ່ວຍທຸລະກິດຕ່າງໆ ອ້ອມຂ້າງແຂວງຄຳມ່ວນ.

ເລື່ອງ: ການຄຸ້ມຄອງ ແລະ ກວດກາການແລກປ່ຽນເງິນຕາຕ່າງປະເທດ ໃຫ້ເຄື່ອນໄຫວຖືກຕ້ອງ ແລະ ສອດຄ່ອງຕາມລະບຽບກົດໝາຍ.

- ອີງຕາມ : ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 03/ສພຊ, ລົງວັນທີ 21/10/2003;
- ອີງຕາມ : ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມ : ລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ ສະບັບເລກທີ 01/ປປທ, ລົງວັນທີ 17 ມີນາ 2008 ແລະ ບົດແນະນຳກ່ຽວກັບການຈັດຕັ້ງປະຕິບັດລັດຖະບັນຍັດດັ່ງກ່າວ ສະບັບເລກທີ 01/ທຫລ ລົງວັນທີ 02 ເມສາ2010;
- ອີງຕາມ : ໃບສະເໜີ ຂອງ ທະນາຄານແຫ່ງ ສປປ ລາວ ພາກກາງ ທີ່ແຂວງສະຫວັນນະເຂດ ສະບັບເລກທີ 11/ ທຫລ.ສຂ ລົງວັນທີ 11 ມັງກອນ 2013.

## ເຈົ້າແຂວງໆຄຳມ່ວນ ອອກແຈ້ງການດັ່ງນີ້ :

1. ໃຫ້ອຳນາດການປົກຄອງທ້ອງຖິ່ນທຸກຂັ້ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເອົາໃຈໃສ່ເພີ່ມທະວີໃນການຄຸ້ມຄອງ ແລະ ກວດກາການແລກປ່ຽນເງິນຕາຕ່າງປະເທດ ຂອງບັນດາບຸກຄົນ, ນິຕິບຸກຄົນ, ບໍລິສັດ, ຫ້າງຮ້ານຕ່າງໆ ແລະ ການຈັດຕັ້ງລັດທຸກພາກສ່ວນພາຍໃນແຂວງ ທີ່ມີການເຄື່ອນໄຫວແລກປ່ຽນເງິນຕາຕ່າງປະເທດ ບໍ່ຖືກຕ້ອງຕາມກົດໝາຍ ພ້ອມດຽວກັນນັ້ນຖ້າບັນດາບຸກຄົນ, ນິຕິບຸກຄົນ, ບໍລິສັດ, ຫ້າງຮ້ານຕ່າງໆພາຍໃນແຂວງ ທີ່ມີຄວາມສົນໃຈ ໃນການດຳເນີນທຸລະກິດແລກປ່ຽນເງິນຕາຕ່າງປະເທດ ແມ່ນໃຫ້ໄປພົວພັນຂໍອະນຸຍາດກັບທະນາຄານແຫ່ງ ສປປ ລາວ ພາກ ກາງ ທີ່ແຂວງສະຫວັນນະເຂດ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ.

2. ສຳລັບບຸກຄົນ, ນິຕິບຸກຄົນ, ບໍລິສັດ, ຫ້າງຮ້ານຕ່າງໆພາຍໃນແຂວງ ທີ່ເຄື່ອນໄຫວບໍ່ຖືກຕ້ອງ ແລະ ສອດຄ່ອງຕາມລະບຽບກົດໝາຍ, ຖ້າຫາກເຈົ້າໜ້າທີ່ກວດກາພົບເຫັນການແລກປ່ຽນເງິນຕາຕ່າງປະເທດຊະຊາຍ ທີ່ບໍ່ຖືກຕ້ອງນັ້ນ ແມ່ນມອບໃຫ້ພາກສ່ວນທີ່ກ່ຽວຂ້ອງ ປະສານສົມທົບກັບອຳນາດການປົກຄອງທ້ອງຖິ່ນ ເປັນຜູ້ສຶກສາ

ອົບຮົມ, ກ່າວເຕືອນ, ຜ່ານການກ່າວເຕືອນຖ້າຫາກວ່າບໍ່ມີການຢຸດເຊົາ ເມື່ອເຈົ້າໜ້າທີ່ກ່ຽວຂ້ອງກວດເຫັນ ກໍ່ມອບໃຫ້ດຳເນີນການປັບໄໝຕາມລະບຽບການຢ່າງເຂັ້ມງວດ ພ້ອມທັງໃຫ້ຢຸດເຊົາການກະທຳດັ່ງກ່າວທັນທີ.

3. ສຳລັບຮ້ານແລກປ່ຽນເງິນຕາຕ່າງປະເທດເອກະຊົນພາຍໃນແຂວງ ຕ້ອງໄປແຈ້ງຂຶ້ນທະບຽນ ແລະ ຂໍອະນຸຍາດດຳເນີນທຸລະກິດດັ່ງກ່າວກັບ ທະນາຄານແຫ່ງ ສປປ ລາວ ພາກກາງ ທີ່ແຂວງສະຫວັນນະເຂດ ໃຫ້ຖືກຕ້ອງຕາມຂັ້ນຕອນ ແລະ ລະບຽບການທີ່ວາງອອກ.

4. ຫ້າມທຸກໆກໍລະນີ/ທຸລະກຳ ການດຳເນີນທຸລະກິດແລກປ່ຽນເງິນຕາຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງຢ່າງເດັດຂາດ.

5. ມອບໃຫ້ບັນດາສາຂາທະນາຄານ ປະຈຳແຂວງຄຳມ່ວນ ເປັນເຈົ້າການປະສານສົມທົບກັບ ທະນາຄານແຫ່ງ ສປປ ລາວ ພາກກາງ ທີ່ແຂວງສະຫັວນະເຂດ ແລະ ບັນດາພະແນກທີ່ກ່ຽວຂ້ອງ ເປັນຕົ້ນ: ພະແນກສ່ວຍສາອາກອນແຂວງ, ພະແນກອຸດສະຫະກຳ ແລະ ການຄ້າແຂວງ, ໄອຍະການແຂວງ, ສານປະຊາຊົນແຂວງ, ເຈົ້າໜ້າທີ່ຕຳຫຼວດເສດຖະກິດ ແລະ ອຳນາດການປົກຄອງທ້ອງຖິ່ນທຸກຂັ້ນ ເພື່ອຈັດຕັ້ງເປັນກຳມະການລົງກວດກາບັນດາກິດຈະການເຫຼົ່ານັ້ນ ໃຫ້ດຳເນີນໄປຕາມກົດໝາຍ, ລັດຖະບັນຍັດ, ຂໍ້ກຳນົດ, ບົດແນະນຳ ແລະ ກົດລະບຽບທີ່ວາງອອກຢ່າງເຂັ້ມງວດ ແລະ ພ້ອມທັງເປັນການເພີ່ມທະວີຊຸກຍູ້ ໃນການຈັດເກັບງົບປະມານຂອງລັດຕື່ມອີກ.

ດັ່ງນັ້ນ, ຈຶ່ງແຈ້ງການມາຍັງ ອົງການຈັດຕັ້ງລັດ, ອົງການຈັດຕັ້ງສັງຄົມ ລວມທັງຫົວໜ່ວຍທຸລະກິດ, ຫ້າງຮ້ານຂອງບຸກຄົນ ແລະ ນິຕິບຸກຄົນ ໃນທົ່ວແຂວງເພື່ອຮັບຊາບ ແລະ ປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ.

ເຈົ້າແຂວງໆຄຳມ່ວນ

ຄຳໃບ ດຳລັດ